ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ເລກທີ: 05 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ: 15 SEP 2015

# ລະບຽບ
# ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້
# ລະບົບໂປຣແກຣມລາຍງານການເຄື່ອນໄຫວບັນຊີເງິນຝາກ
# ຢູ່ ທຫລ ແບບອອນລາຍ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງສປປລາວສະບັບເລກທີ **05/ສພຊ**, ລົງວັນທີ **14** ຕຸລາ **1999;**
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບເລກທີ **03/ສພຊ**, ລົງວັນທີ **26** ທັນວາ **2006;**
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກລະບຽບ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ລະບຽບສະບັບນີ້ກຳນົດຫຼັກການໃນການຄຸ້ມຄອງ ແລະ ນຳໃຊ້ລະບົບໂປຣແກຣມ ລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ ທະນາຄານແຫ່ງສປປລາວແບບອອນລາຍ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ສະໜອງຂໍ້ມູນຕ່າງໆທີ່ຕິດພັນກັບການເຄື່ອນໄຫວບັນຊີເງິນຝາກ ຂອງທະນາຄານແຫ່ງ ສປປ ລາວ ແນໃສ່ເຮັດໃຫ້ສະມາຊິກທີ່ເຂົ້າຮ່ວມໃນລະບົບສາມາດ ນຳໃຊ້ຂໍ້ມູນຢ່າງມີປະສິດທິຜົນ ແລະ ຖືກຕ້ອງຕາມເປົ້າໝາຍ.

**ມາດຕາ 2. ລະບົບໂປຣແກຣມລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ ທຫລ ແບບອອນລາຍ**

ລະບົບໂປຣແກຣມລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ ທຫລ ແບບອອນລາຍ ຫຼື ຂຽນເປັນພາສາອັງກິດ Account Statement Online ໝາຍເຖິງ ໂປຣແກຣມທີ່ສະໜອງຂໍ້ມູນຕ່າງໆກ່ຽວກັບ

ການເຄື່ອນໄຫວບັນຊີເງິນຝາກຂອງສະມາຊິກຜູ້ນຳໃຊ້ລະບົບ. ການນຳໃຊ້ລະບົບໂປຣແກຣມດັ່ງກ່າວ ແມ່ນເຂົ້ານຳໃຊ້ໂດຍຜ່ານເຄືອຂ່າຍຄອມພິວເຕີທີ່ໄດ້ເຊື່ອມຕໍ່ກັນລະຫວ່າງລະບົບຂອງທະນາຄານແຫ່ງ ສປປລາວ ກັບສະມາຊິກຜູ້ນຳໃຊ້ລະບົບເພື່ອອຳນວຍຄວາມສະດວກໃນການຕິດຕາມກວດກາຍອດເຫຼືອບັນຊີເງິນຝາກຂອງຕົນທີ່ມີຢູ່ ທະນາຄານແຫ່ງ ສປປ ລາວ ໄດ້ແບບທັນທີຕາມໂມງລັດຖະການ.

**ມາດຕາ 3. ຂອບເຂດການນຳໃຊ້**

ລະບຽບສະບັບນີ້ມີຜົນນຳໃຊ້ຕໍ່ທະນາຄານທຸລະກິດ, ສະຖາບັນການເງິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ,ກະຊວງແລະອົງການຈັດຕັ້ງອື່ນໆ ທີ່ມີບັນຊີເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ.

## ໝວດທີ 2
## ການເປັນສະມາຊິກ

**ມາດຕາ 4. ສະມາຊິກ**

ສະມາຊິກລະບົບໂປຣແກຣມລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ ທຫລ ແບບອອນລາຍ ແມ່ນທະນາຄານທຸລະກິດ, ສະຖາບັນການເງິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ກະຊວງແລະອົງການຈັດຕັ້ງອື່ນໆ ທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ.

**ມາດຕາ 5. ການສະເໜີຂໍເປັນສະມາຊິກ**

ທະນາຄານທຸລະກິດ, ສະຖາບັນການເງິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ກະຊວງ ແລະ ອົງການຈັດຕັ້ງອື່ນໆ ທີ່ມີຈຸດປະສົງສະໝັກເປັນສະມາຊິກ ລະບົບໂປຣແກຣມລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ ທຫລ ແບບອອນລາຍ ຕ້ອງມີບັນຊີເງິນຝາກຢູ່ ທະນາຄານແຫ່ງ ສປປລາວ ແລະຕ້ອງຍື່ນເອກະສານຄຳຮ້ອງສະໝັກເຂົ້າເປັນສະມາຊິກ ທີ່ຂຽນຂຶ້ນດ້ວຍຕົນເອງຫາກົມບໍລິການ ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາຕາມລະບຽບການ.

**ມາດຕາ 6. ການພິຈາລະນາຄຳຮ້ອງຂໍເປັນສະມາຊິກ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາ ແລະ ແຈ້ງຕອບຜົນຂອງການຄົ້ນຄວ້າ ສຳນວນຄຳຮ້ອງຂອງທະນາຄານທຸລະກິດ, ສະຖາບັນການເງິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ກະຊວງ ແລະ ອົງການຈັດຕັ້ງອື່ນໆ ທີ່ໄດ້ຍື່ນເອກະສານສະໝັກເຂົ້າເປັນສະມາຊິກ ພາຍໃນ 5 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ.

**ມາດຕາ 7. ຄ່າທຳນຽມ ແລະ ຄ່າບໍລິການ**

ສະມາຊິກທີ່ນຳໃຊ້ໂປຣແກຣມລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ ທຫລ ແບບອອນລາຍ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະ

ໄລຍະ ເພື່ອເປັນການບຳລຸງຮັກສາ, ປັບປຸງ ແລະ ຍົກລະດັບລະບົບໃຫ້ມີຄວາມທັນສະໄໝ ແທດເໝາະກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ.

## ໝວດທີ 3
## ການຄຸ້ມຄອງລະບົບໂປຣແກຣມ

**ມາດຕາ 8. ຜູ້ເຂົ້າຮ່ວມລະບົບ**

ຜູ້ເຂົ້າຮ່ວມໃນລະບົບໂປຣແກຣມລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ ທຫລ ແບບອອນລາຍ ປະກອບດ້ວຍ:

1. ກົມເຕັກໂນໂລຊີຂໍ້ມູນຂ່າວສານ ເປັນຜູ້ບໍລິຫານຄຸ້ມຄອງລະບົບ ທັງເປັນຜູ້ໃຫ້ການສະໜັບສະໜູນທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານຂອງລະບົບ;
2. ກົມບໍລິການທະນາຄານເປັນຜູ້ໃຫ້ບໍລິການ;
3. ສະມາຊິກຕາມທີ່ກຳນົດໄວ້ໃນມາດຕາ 4 ລະບຽບສະບັບນີ້ ເປັນຜູ້ນຳໃຊ້ລະບົບ.

**ມາດຕາ 9. ສິດ ແລະ ໜ້າທີ່ຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ**

ກົມເຕັກໂນໂລຊີຂໍ້ມູນຂ່າວສານ, ທະນາຄານແຫ່ງ ສປປ ລາວ ໃນນາມ ເປັນຜູ້ບໍລິຫານຄຸ້ມຄອງລະບົບ ທັງໃຫ້ການສະໜັບສະໜູນທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານຂອງລະບົບ ມີສິດ ແລະ ໜ້າທີ່ ຫຼັກ ດັ່ງນີ້:

- ພັດທະນາ, ປັບປຸງ ແລະ ຍົກລະດັບລະບົບໂປຣແກຣມ ໃຫ້ມີຄວາມໝັ້ນຄົງປອດໄພ, ໜ້າເຊື່ອຖືແລະແທດເໝາະກັບສະພາບການຈັດຕັ້ງປະຕິບັດວຽກງານໃນແຕ່ລະໄລຍະ;
- ແຕ່ງຕັ້ງພະນັກງານເພື່ອຮັບຜິດຊອບຕິດຕາມການເຄື່ອນໄຫວຂອງລະບົບ;
- ໃຫ້ການສະໜັບສະໜູນ, ຊ່ວຍເຫລືອ ແລະ ອຳນວຍຄວາມສະດວກທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານຂອງລະບົບໃຫ້ກັບກົມບໍລິການທະນາຄານ ເພື່ອເຂົ້າເຖິງລະບົບໄດ້ຢ່າງເປັນປົກກະຕິໃນແຕ່ລະໄລຍະ;
- ບໍລິຫານ, ຄຸ້ມຄອງ, ປ້ອງກັນ ແລະ ບຳລຸງຮັກສາລະບົບອຸປະກອນເຕັກນິກ ແລະ ເຄື່ອງມືຕ່າງໆທີ່ຮັບໃຊ້ໃນລະບົບ;
- ຂຶ້ນແຜນງົບປະມານເພື່ອພັດທະນາ, ປັບປຸງ ແລະຍົກລະດັບລະບົບໃນແຕ່ລະໄລຍະ;
- ໃຫ້ການຮ່ວມມື ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບລະບົບ ຕາມພາລະບົດບາດຂອງກົມຕົນ;
- ຮັກສາຄວາມລັບຂອງຂໍ້ມູນທີ່ຕິດພັນກັບລະບົບ ຕາມລະບຽບການ ແລະ ກົດໝາຍຂອງ ສປປ ລາວ;
- ສະຫຼຸບລາຍງານຂັ້ນເທິງກ່ຽວກັບການນຳໃຊ້ລະບົບ;
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

### ມາດຕາ 10. ສິດ ແລະ ໜ້າທີ່ຂອງກົມບໍລິການທະນາຄານ.

ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ທີ່ເປັນຜູ່ໃຫ້ບໍລິການ ມີສິດ ແລະ ໜ້າທີ່ດັ່ງນີ້:

- ແຕ່ງຕັ້ງພະນັກງານເພື່ອຮັບຜິດຊອບຕິດຕາມການເຄື່ອນໄຫວຂອງລະບົບ ພ້ອມທັງແຈ້ງໃຫ້ສະມາຊິກຜູ່ນໍາໃຊ້ລະບົບຮັບຊາບ;
- ລົງທະບຽນ, ຮັບຮອງ, ໂຈະ ແລະ ຍົກເລີກ ການເປັນສະມາຊິກຂອງລະບົບ;
- ໃຫ້ການສະໜັບສະໜູນ, ຊ່ວຍເຫລືອ ແລະ ອໍານວຍຄວາມສະດວກໃຫ້ກັບສະມາຊິກໃນການປະຕິບັດໜ້າທີ່ປະຈໍາວັນທີ່ຕິດພັນກັບຂໍ້ມູນໃນລະບົບ;
- ກໍານົດ ແລະ ເກັບຄ່າບໍລິການ ໃນການນໍາໃຊ້ລະບົບ ຕາມຄວາມເໝາະສົມ;
- ໃຫ້ການຮ່ວມມື ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບລະບົບ ຕາມພາລະບົດບາດຂອງກົມຕົນ;
- ຮັກສາຄວາມລັບຂອງຂໍ້ມູນທີ່ຕິດພັນກັບລະບົບ ຕາມລະບຽບການ ແລະ ກົດໝາຍຂອງ ສປປ ລາວ;
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

### ມາດຕາ 11. ສິດ ແລະ ໜ້າທີ່ຂອງສະມາຊິກ

ສະມາຊິກມີສິດ ແລະ ໜ້າທີ່ດັ່ງນີ້:

- ສະເໜີກົມບໍລິການທະນາຄານເພື່ອເຂົ້າເປັນສະມາຊິກ, ໂຈະ ຫຼື ຍົກເລີກການເປັນສະມາຊິກຂອງລະບົບຢ່າງເປັນລາຍລັກອັກສອນ;
- ແຕ່ງຕັ້ງພະນັກງານຮັບຜິດຊອບໃນນາມຂອງຕົນເອງເພື່ອນໍາໃຊ້ລະບົບຢ່າງເປັນລາຍລັກອັກສອນ ພ້ອມທັງສົ່ງລາຍຊື່ ແລະ ເບີໂທລະສັບຕິດຕໍ່ໄປທີ່ ກົມບໍລິການທະນາຄານແຫ່ງ ສປປ ລາວ;
- ເຂົ້າຄົ້ນຫາ ແລະ ສອບຖາມຂໍ້ມູນຜ່ານລະບົບ;
- ຈ່າຍຄ່າທໍານຽມ ແລະ ຄ່າບໍລິການສະມາຊິກນໍາໃຊ້ລະບົບ ຕາມທີ່ທະນາຄານແຫ່ງ ສປປ ລາວ ກໍານົດອອກໃນແຕ່ລະໄລຍະ;
- ໃຫ້ການຮ່ວມມື ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບລະບົບ ຕາມພາລະບົດບາດຂອງໜ່ວຍງານຕົນ;
- ຮັກສາຄວາມລັບຂອງຂໍ້ມູນທີ່ຕິດພັນກັບລະບົບ ຕາມກົດໝາຍ ແລະ ລະບຽບການ;
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

### ມາດຕາ 12. ວັນ ແລະ ເວລາໃຫ້ບໍລິການ

ລະບົບໂປຣແກຣມລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ ທຫລ ແບບອອນລາຍຈະເປີດໃຫ້ບໍລິການແຕ່ ເວລາ 8:00 ໂມງ ເຖິງ 16:00 ໂມງ ຂອງທຸກວັນລັດຖະການ.

### ມາດຕາ13. ຂໍ້ຫ້າມ

ຫ້າມບຸກຄົນ ແລະ ການຈັດຕັ້ງ ນໍາເອົາຂໍ້ມູນໃນລະບົບໄປນໍາໃຊ້ ຫຼື ສະໜອງໃຫ້ພາກສ່ວນອື່ນ ກ່ອນໄດ້ຮັບອະນຸຍາດ ເວັ້ນເສຍແຕ່ກົດໝາຍໄດ້ກໍານົດໄວ້ເປັນຢ່າງອື່ນ.

## ໝວດທີ 4
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 14. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບລະບົບໂປຣແກຣມ ດັ່ງກ່າວ ດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນງານດີເດັ່ນ ແມ່ນຈະໄດ້ຮັບການປະຕິບັດນະໂຍບາຍ ຕາມ ລະບຽບການ ທີ່ ທະນາຄານແຫ່ງ ສປປ ລາວ ກໍານົດອອກໃນແຕ່ລະໄລຍະ.

**ມາດຕາ 15. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບລະບົບ ຫາກລະເມີດ ລະບຽບສະບັບນີ້ ຈະຖືກປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ກໍານົດອອກໃນແຕ່ລະໄລຍະ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 16. ການຈັດຕັ້ງປະຕິບັດ**

ກົມບໍລິການທະນາຄານ ແລະ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ທະນາຄານແຫ່ງ ສປປ ລາວ ເປັນເຈົ້າ ການຈັດຕັ້ງປະຕິບັດລະບຽບໃຫ້ມີປະສິດທິຜົນ ແລະ ສະມາຊິກຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບ ສະບັບນີ້ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 17. ຜົນສັກສິດ**

ລະບຽບສະບັບນີ້ມີຜົນສັກສິດນັບແຕ່ວັນທີ່ໄດ້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ.ລາວ ຜູ້ວ່າການ

**ດຣ. ສົມພາວ ໄຟສິດ**